ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ ເລກທີ 26 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ

---

ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 2 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ພາຍຫລັງທີ່ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງກ່ຽວກັບເນື້ອໃນການປັບປຸງຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບປັບປຸງ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ V, ໃນວາລະປະຊຸມຕອນບ່າຍຂອງວັນທີ 6 ພຶດສະພາ 2003.

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1:</u> ຮັບຮອງເອົາກົດໝາຍວ່າດ້ວຍສະພາແຫ່ງຊາດສະບັບປັບປຸງດ້ວຍຄະແນນສຽງເປັນ ເອກະສັນ.

<u>ມາດຕາ 2:</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ວຽງຈັນ, ວັນທີ 6 ພຶດສະພາ 2003

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 33 /ສປປ

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 1 ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 26 /ສພຊ, ລົງວັນທີ 6 ພຶດສະພາ 2003 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 20/ ຄປຈ, ລົງວັນທີ ພຶດສະພາ 2003.

**ປະທານປະເທດ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວອອກລັດຖະດຳລັດ:**

<u>ມາດຕາ 1:</u> ປະກາດໃຊ້ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ສະບັບປັບປຸງ.

<u>ມາດຕາ 2:</u> ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 29 ພຶດສະພາ 2003

ປະທານປະເທດແຫ່ງ ສປປລາວ

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

ສະພາແຫ່ງຊາດ ເລກທີ 01 /ສພຊ

ວຽງຈັນ, 6 ພຶດສະພາ 2003

# ກົດໝາຍ
# ວ່າດ້ວຍສະພາແຫ່ງຊາດ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ໃໝ່). ຈຸດປະສົງຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ**

ກົດໝາຍວ່າດ້ວຍສະພາແຫ່ງຊາດກຳນົດຫລັກການ, ລະບຽບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແນໃສ່ເພີ່ມທະວີຄວາມເຂັ້ມແຂງຂອງອົງການອຳນາດແຫ່ງລັດ, ສ້າງລັດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອສິດຜົນປະໂຫຍດຂອງປະຊາຊົນ.

**ມາດຕາ 2 (ໃໝ່). ທີ່ຕັ້ງ ແລະພາລະບົດບາດຂອງສະພາແຫ່ງຊາດ**

ສະພາແຫ່ງຊາດແມ່ນອົງການຕົວແທນແຫ່ງສິດອຳນາດ ແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ເປັນອົງການອຳນາດແຫ່ງລັດ ທັງເປັນອົງການນິຕິບັນຍັດທີ່ມີສິດຕົກລົງບັນຫາພື້ນຖານຂອງປະເທດຊາດ, ຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນ.

**ມາດຕາ 3 (ໃໝ່). ສິດ ແລະໜ້າທີ່ຂອງສະພາແຫ່ງຊາດ**

ສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້ :

1. ສ້າງ, ຮັບຮອງເອົາ ຫລືປ່ຽນແປງລັດຖະທຳມະນູນ ;
2. ພິຈາລະນາ, ຮັບຮອງເອົາ, ປ່ຽນແປງ, ລົບລ້າງ ຫລືຍົກເລີກກົດໝາຍ;

3. ພິຈາລະນາ, ຮັບຮອງເອົາການກຳນົດ, ການປ່ຽນແປງ ຫລືການລົບລ້າງພາສີ ແລະສ່ວຍສາອາກອນ;
4. ພິຈາລະນາ, ຮັບຮອງເອົາແຜນຍຸດທະສາດແຫ່ງການພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ;
5. ເລືອກຕັ້ງ ຫລືປົດຕຳແໜ່ງປະທານ, ຮອງປະທານ, ກຳມະການຄະນະປະຈຳສະພາແຫ່ງຊາດ, ສ້າງຕັ້ງ ຫລືຍຸບເລີກບັນດາກຳມາທິການສະພາແຫ່ງຊາດ, ເລືອກຕັ້ງ ຫລືປົດຕຳແໜ່ງບັນດາຫົວໜ້າກຳມາທິການ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຮອງຫົວໜ້າກຳມາທິການສະພາແຫ່ງຊາດ, ສ້າງຕັ້ງ ຫລືຍຸບ ເລີກຄະນະລັດຖະສະພາສາກົນຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
6. ເລືອກຕັ້ງ ຫລືປົດຕຳແໜ່ງປະທານປະເທດ ແລະຮອງປະທານປະເທດຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
7. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ ຫລືປົດຕຳແໜ່ງນາຍົກລັດຖະ ມົນຕີ ຕາມການສະເໜີຂອງປະທານປະເທດ;
8. ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງ, ການຍົກຍ້າຍ ຫລືການປົດຕຳແໜ່ງສະມາຊິກລັດຖະບານ ຕາມການສະເໜີຂອງນາຍົກລັດຖະມົນຕີ;
9. ເລືອກຕັ້ງ ຫລື ປົດຕຳແໜ່ງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງປະທານປະເທດ;
10. ຕົກລົງສ້າງຕັ້ງ ຫລືຍຸບເລີກກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະນະຄອນ, ຕົກລົງເຂດແດນຂອງແຂວງ ແລະນະຄອນ ຕາມການສະເໜີຂອງນາຍົກລັດຖະມົນຕີ;
11. ຕົກລົງໃຫ້ນິລະໂທດກຳ;
12. ຕົກລົງໃຫ້ສັດຕະຍາບັນ ຫລືລົບລ້າງສົນທິສັນຍາ, ສັນຍາທີ່ໄດ້ເຊັນກັບຕ່າງປະເທດຕາມກົດໝາຍ;
13. ຕົກລົງບັນຫາສົງຄາມ ຫລືສັນຕິພາບ;
14. ຕິດຕາມກວດກາການເຄົາລົບ ແລະປະຕິບັດລັດຖະທຳມະນູນ ແລະກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ;
15. ສະເໜີໃຫ້ລັດຖະບານ, ສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ ລົບລ້າງຂໍ້ກຳນົດຂອງຕົນ ທີ່ຂັດກັບລັດຖະທຳມະນູນ ແລະກົດ ໝາຍ;
16. ພົວພັນກັບຕ່າງປະເທດ ແລະອົງການລັດຖະສະພາສາກົນ;
17. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 4. ຫລັກການເຄື່ອນໄຫວຂອງສະພາແຫ່ງຊາດ**

ສະພາແຫ່ງຊາດຈັດຕັ້ງ ແລະເຄື່ອນໄຫວຕາມຫລັກການລວມສູນປະຊາທິປະໄຕ, ປະຕິບັດໜ້າທີ່ວຽກງານຕາມລະບອບປະຊຸມ ແລະຕົກລົງບັນຫາໂດຍຖືເອົາຕາມສຽງສ່ວນ ຫລາຍ.

**ມາດຕາ 5. ອາຍຸການຂອງສະພາແຫ່ງຊາດ**

ສະພາແຫ່ງຊາດແຕ່ລະຊຸດ ມີອາຍຸການຫ້າປີ ຊຶ່ງເລີ່ມແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດນັ້ນ ໄປເຖິງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດໃໝ່.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຕ້ອງໃຫ້ແລ້ວຢ່າງຊ້າຫົກສິບວັນ ກ່ອນສະພາແຫ່ງຊາດຊຸດເກົ່າຈະໝົດອາຍຸການ.

ໃນກໍລະນີທີ່ເກີດສົງຄາມ ຫລືດ້ວຍສາເຫດອື່ນ ຊຶ່ງກໍ່ຄວາມຫຍຸ້ງຍາກໃຫ້ແກ່ການເລືອກຕັ້ງນັ້ນ ສະພາແຫ່ງຊາດຈະຕໍ່ອາຍຸການຂອງຕົນກໍໄດ້ ແຕ່ຕ້ອງດໍາເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ຢ່າງຊ້າບໍ່ໃຫ້ເກີນຫົກເດືອນ ພາຍຫລັງສະພາບການໄດ້ກັບຄືນສູ່ປົກກະຕິ.

ໃນກໍລະນີທີ່ມີຄວາມຈໍາເປັນ ສະພາແຫ່ງຊາດຈະດໍາເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກ່ອນການໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີຢ່າງໜ້ອຍສອງສ່ວນສາມ ຂອງຈໍານວນສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 6. ງົບປະມານຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີງົບປະມານເອກະລາດສະເພາະຂອງຕົນ ຢູ່ໃນງົບປະມານແຫ່ງລັດເພື່ອຮັບໃຊ້ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ .

## ໝວດທີ II
## ກອງປະຊຸມສະພາແຫ່ງຊາດ

**ມາດຕາ 7 (ໃໝ່). ກອງປະຊຸມສະພາແຫ່ງຊາດ**

ສະພາແຫ່ງຊາດມີກອງປະຊຸມ ສາມປະເພດດັ່ງນີ້ :

1. ກອງປະຊຸມຄັ້ງປະຖົມມະລຶກ;
2. ກອງປະຊຸມສະໄໝສາມັນ;
3. ກອງປະຊຸມສະໄໝວິສາມັນ.

**ມາດຕາ 8 (ໃໝ່). ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ**

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ເປີດຂຶ້ນຢ່າງຊ້າ ຫົກສິບວັນ ຫລັງຈາກການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຊຶ່ງແມ່ນປະທານສະພາແຫ່ງຊາດຊຸດເກົ່າເປັນປະ

ທານ ແລະຊີ້ນຳກອງປະຊຸມຄັ້ງປະຖົມມະລືກ ຈົນກວ່າໄດ້ເລືອກຕັ້ງປະທານສະພາແຫ່ງຊາດຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້ :

1. ຮັບຟັງການລາຍງານຂອງປະທານຄະນະກຳມະການເລືອກຕັ້ງລະດັບຊາດກ່ຽວກັບຜົນຂອງການເລືອກຕັ້ງ ແລະຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດຕໍ່ກອງປະຊຸມ;
2. ເລືອກຕັ້ງປະທານ, ຮອງປະທານ ແລະກຳມະການຄະນະປະຈຳສະພາແຫ່ງຊາດ ;
3. ສ້າງຕັ້ງບັນດາກຳມາທິການຂອງສະພາແຫ່ງຊາດ;
4. ເລືອກຕັ້ງບັນດາຫົວໜ້າກຳມາທິການ, ຫົວໜ້າຫ້ອງວ່າການ ແລະຮອງຫົວ ໜ້າບັນດາກຳມາທິການຂອງສະພາແຫ່ງຊາດ ;
5. ຕົກລົງສ້າງຕັ້ງ ຄະນະລັດຖະສະພາສາກົນຂອງສະພາແຫ່ງຊາດ;
6. ເລືອກຕັ້ງປະທານປະເທດ ແລະຮອງປະທານປະເທດ;
7. ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງ, ການຍົກຍ້າຍ ຫລືການປົດຕຳແໜ່ງສະມາຊິກລັດຖະບານ;
8. ເລືອກຕັ້ງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ;
9. ພິຈາລະນາ, ຮັບຮອງເອົາໂຄງການດຳເນີນງານຂອງສະພາແຫ່ງຊາດ;
10. ພິຈາລະນາ ແລະຕົກລົງບັນຫາອື່ນໆ ທີ່ເຫັນວ່າມີຄວາມສຳຄັນ ແລະຈຳເປັນ.

**ມາດຕາ 9 (ໃໝ່). ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ**

ສະພາແຫ່ງຊາດເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ, ເທື່ອທີໜຶ່ງເປີດຂຶ້ນໃນລະຫວ່າງເດືອນ ມີນາ ຫາເດືອນ ເມສາ ແລະເທື່ອທີສອງໃນລະຫວ່າງເດືອນ ກັນຍາ ຫາເດືອນ ຕຸລາ ໂດຍແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຮຽກໂຮມ.

ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ໃນລະຫວ່າງເດືອນ ມີນາ ຫາເດືອນເມສາ ມີໜ້າທີ່ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາກົດໝາຍໃຫມ່ ແລະການປັບປຸງກົດໝາຍ;
2. ຮັບຟັງ ແລະພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດທົກເດືອນ ຕົ້ນປີ ແລະພິຈາລະນາ, ຮັບຮອງເອົາການດັດແກ້ແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດຫົກເດືອນທ້າຍປີຂອງລັດຖະບານຖ້າມີ;
3. ຮັບຟັງ ແລະພິຈາລະນາບົດລາຍງານຂອງສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະຕິບັດລັດຖະທຳມະນູນ ແລະກົດໝາຍໃນຫົກເດືອນຕົ້ນປີ;

4. ຮັບຟັງ, ພິຈາລະນາ ແລະຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ ຂອງຄະນະປະຈຳສະພາແຫ່ງຊາດ ປະຈຳຫົກເດືອນຕົ້ນປີ;
5. ພິຈາລະນາ ແລະຕົກລົງບັນຫາອື່ນໆ ທີ່ເຫັນວ່າມີຄວາມສຳຄັນ ແລະຈຳເປັນ.

ກອງປະຊຸມສະໄຫມສາມັນຂອງສະພາແຫ່ງຊາດໃນລະຫວ່າງເດືອນ ກັນຍາ ຫາເດືອນ ຕຸລາ ມີໜ້າທີ່ດັ່ງນີ້ :

1. ຮັບຟັງ ແລະພິຈາລະນາບົດລາຍງານປະຈຳປີຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ;
2. ຮັບຟັງ, ພິຈາລະນາ ແລະຮັບຮອງເອົາທິດທາງແຜນການພັດທະນາເສດຖະກິດ -ສັງຄົມ ແລະງົບປະມານແຫ່ງລັດປະຈຳສົກປີຕໍ່ໄປຂອງລັດຖະບານ;
3. ຮັບຟັງ ແລະພິຈາລະນາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ ແລະທິດທາງໜ້າທີ່ວຽກງານສຳລັບສົກປີຕໍ່ໄປຂອງສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ;
4. ຮັບຟັງ, ພິຈາລະນາ ແລະຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານປະຈຳປີ ແລະທິດທາງໜ້າທີ່ວຽກງານສົກປີຕໍ່ໄປ ຂອງສະພາແຫ່ງຊາດ;
5. ພິຈາລະນາ ແລະຕົກລົງບັນຫາອື່ນໆ ທີ່ເຫັນວ່າມີຄວາມສຳຄັນ ແລະຈຳເປັນ.

**<u>ມາດຕາ</u> 10. ( ໃຫມ່ ) ກອງປະຊຸມສະໄຫມວິສາມັນຂອງສະພາແຫ່ງຊາດ**

ສະພາແຫ່ງຊາດຈະເປີດກອງປະຊຸມສະໄຫມວິສາມັນກໍໄດ້ ໃນລະຫວ່າງສອງກອງປະຊຸມສະໄຫມສາມັນ ເພື່ອພິຈາລະນາຕົກລົງບັນຫາທີ່ສຳຄັນ ແລະຈຳເປັນຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຫລືຕາມການສະເໜີຂອງປະທານປະເທດ, ນາຍົກລັດຖະມົນຕີ ຫລືສະມາຊິກສະພາແຫ່ງຊາດຢ່າງໜ້ອຍຫນຶ່ງສ່ວນສີ່ຂອງຈຳນວນສະມາຊິກທັງຫມົດ.

**<u>ມາດຕາ</u> 11. ຫລັກການດຳເນີນກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ຈະດຳເນີນໄດ້ກໍຕໍ່ເມື່ອຫາກມີສະມາຊິກສະພາແຫ່ງຊາດເຂົ້າຮ່ວມຫລາຍກວ່າເຄິ່ງຫນຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດທັງຫມົດ.

ກອງປະຊຸມສະພາແຫ່ງຊາດດຳເນີນໄປຢ່າງເປີດເຜີຍ. ໃນກໍລະນີທີ່ຈຳເປັນຄະນະປະຈຳສະພາແຫ່ງຊາດຈະຕົກລົງດຳເນີນກອງປະຊຸມປິດລັບກໍໄດ້.

**<u>ມາດຕາ</u> 12. ( ໃຫມ່ ) ການຮຽກໂຮມກອງປະຊຸມສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດເປັນຜູ້ຮຽກໂຮມກອງປະຊຸມສະພາແຫ່ງຊາດ. ເອກະ

ສານທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ຕ້ອງສົ່ງໃຫ້ສະມາຊິກສະພາແຫ່ງຊາດຢ່າງຊ້າເຈັດວັນ ກ່ອນວັນເປີດກອງປະຊຸມ.

**ມາດຕາ 13. ( ໃໝ່) ຜູ້ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ**

ຜູ້ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ ແມ່ນບັນດາສະມາຊິກສະພາແຫ່ງຊາດ. ນອກຈາກນີ້ຈະເຊີນສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ຜູ້ຕາງໜ້າອົງການຈັດຕັ້ງການເມືອງ-ສັງຄົມ ແລະຕົວແທນຊັ້ນຄົນຕ່າງໆເຂົ້າຮ່ວມນຳກໍໄດ້. ຜູ້ທີ່ຖືກເຊີນເຂົ້າຮ່ວມກອງປະຊຸມນັ້ນ ອາດຈະໄດ້ຮັບອະນຸຍາດໃຫ້ປະກອບຄວາມຄິດຄວາມເຫັນຕໍ່ກອງປະຊຸມແຕ່ຫາກບໍ່ມີສິດລົງຄະແນນສຽງ.

**ມາດຕາ 14 ( ໃໝ່ ). ມະຕິ ຂອງ ກອງປະຊຸມສະພາແຫ່ງຊາດ**

ການລົງມະຕິຂອງກອງປະຊຸມສະພາແຫ່ງຊາດ ແມ່ນດຳເນີນດ້ວຍການລົງຄະແນນສຽງຢ່າງເປີດເຜີຍ ຫລືປິດລັບກໍໄດ້ ໂດຍອີງຕາມການຕົກລົງຂອງກອງປະຊຸມ.

ມະຕິກອງປະຊຸມສະພາແຫ່ງຊາດຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫລາຍ ກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ ເວັ້ນເສຍແຕ່ໃນກໍລະນີການເລືອກ ຕັ້ງປະທານປະເທດ, ການເລືອກຕັ້ງກ່ອນການໝົດອາຍຸການຂອງສະພາແຫ່ງຊາດ ແລະການ ປ່ຽນແປງລັດຖະທຳມະນູນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ມາດຕາ 54, 66 ແລະ 97.

**ມາດຕາ 15. ບົດບັນທຶກ ຂອງ ກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດແຕ່ລະເທື່ອຕ້ອງເຮັດບົດບັນທຶກ ໂດຍມີການເຊັນຢັ້ງຢືນຂອງຫົວໜ້າຄະນະເລຂານຸການ ແລະປະທານກອງປະຊຸມສະພາແຫ່ງຊາດ.

## ໝວດທີ III
## ໂຄງປະກອບການຈັດຕັ້ງຂອງສະພາແຫ່ງຊາດ

**ມາດຕາ 16 (ໃໝ່). ໂຄງປະກອບການຈັດຕັ້ງຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີໂຄງປະກອບດັ່ງນີ້:

- ປະທານສະພາແຫ່ງຊາດ;
- ຮອງປະທານສະພາແຫ່ງຊາດ;
- ຄະນະປະຈຳສະພາແຫ່ງຊາດ;
- ກຳມາທິການຂອງສະພາແຫ່ງຊາດ;
- ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດ

ເລືອກຕັ້ງ;
- ບັນດາສະມາຊິກສະພາແຫ່ງຊາດ;
- ຫ້ອງວ່າການສະພາແຫ່ງຊາດ.

**ມາດຕາ 17 ( ໃໝ່). ອາຍຸການ**

ອາຍຸການຂອງປະທານ, ຮອງປະທານ, ຄະນະປະຈຳ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະຫ້ອງວ່າການສະພາແຫ່ງຊາດ ແມ່ນເທົ່າກັບອາຍຸການຂອງສະພາແຫ່ງຊາດ.

## ໝວດທີ IV
## ປະທານ ແລະຮອງປະທານສະພາແຫ່ງຊາດ

**ມາດຕາ 18 (ໃໝ່). ປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດ ເປັນຜູ້ຊີ້ນຳ-ນຳພາວຽກງານຂອງສະພາແຫ່ງຊາດ ທັງເປັນຜູ້ຕາງໜ້າໃຫ້ ສະພາແຫ່ງຊາດໃນການພົວພັນວຽກງານພາຍໃນ ແລະຕ່າງປະເທດ.

**ມາດຕາ 19 (ໃໝ່). ສິດ ແລະໜ້າທີ່ຂອງປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ເປັນປະທານກອງປະຊຸມສະພາແຫ່ງຊາດ;
2. ຊີ້ນຳ ແລະກວດກາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ;
3. ຄຸ້ມຄອງຄວາມເປັນລະບຽບຮຽບຮ້ອຍຂອງສະພາແຫ່ງຊາດ;
4. ຊີ້ນຳ-ນຳພາວຽກງານການຕ່າງປະເທດຂອງສະພາແຫ່ງຊາດ;
5. ລົງລາຍເຊັນໃສ່ນິຕິກຳຕ່າງໆ ທີ່ໄດ້ຮັບຮອງເອົາໃນກອງປະຊຸມສະພາແຫ່ງຊາດ;_
6. ປະຕິບັດສິດ ແລະໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 20 ( ໃໝ່ ). ຮອງປະທານສະພາແຫ່ງຊາດ**

ຮອງປະທານສະພາແຫ່ງຊາດ ມີໜ້າທີ່ຊ່ວຍປະທານສະພາແຫ່ງຊາດໃນການປະ ຕິບັດໜ້າທີ່ວຽກງານ ແລະຈະໄດ້ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບ ໝາຍຂອງປະທານສະພາແຫ່ງຊາດ.

ໃນກໍລະນີທີ່ປະທານສະພາແຫ່ງຊາດຕິດຂັດ ແມ່ນຮອງປະທານສະພາແຫ່ງຊາດ ເປັນຜູ້ວ່າການແທນ ຕາມການມອບໝາຍຂອງປະທານສະພາແຫ່ງຊາດ.

**ມາດຕາ 21 (ໃໝ່). ຕາປະທັບຂອງປະທານສະພາແຫ່ງຊາດ**

ຕາປະທັບຂອງປະທານສະພາແຫ່ງຊາດ ເປັນຮູບວົງມົນ, ຢູ່ໃນກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ", ເບື້ອງລຸ່ມຂຽນວ່າ " ປະທານສະພາແຫ່ງຊາດ " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ V

## ຄະນະປະຈຳສະພາແຫ່ງຊາດ

**ມາດຕາ 22. ທີ່ຕັ້ງ ແລະພາລະບົດບາດຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ແມ່ນອົງການປະຈຳການຂອງສະພາແຫ່ງຊາດ, ປະຕິບັດໜ້າທີ່ແທນສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ.

**ມາດຕາ 23. ໂຄງປະກອບຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ປະກອບດ້ວຍປະທານ, ຮອງປະທານ ແລະກຳມະການຈຳນວນໜຶ່ງ. ປະທານ ແລະຮອງປະທານສະພາແຫ່ງຊາດເປັນທັງປະທານ ແລະຮອງປະທານຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 24 (ໃໝ່). ສິດ ແລະໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ກະກຽມກອງປະຊຸມສະພາແຫ່ງຊາດ ແລະຮັບປະກັນໃຫ້ສະພາແຫ່ງຊາດປະຕິບັດແຜນການທີ່ໄດ້ກຳນົດໄວ້;
2. ຕີຄວາມໝາຍ, ອະທິບາຍລັດຖະທຳມະນູນ ແລະກົດໝາຍຕ່າງໆ;
3. ຄົ້ນຄວ້າ, ສ້າງຮ່າງກົດໝາຍ ຫລືຮ່າງລັດຖະບັນຍັດ; ສະເໜີຮ່າງລັດຖະບັນຍັດຕໍ່ປະທານປະເທດ;
4. ພິຈາລະນາ, ຮັບຮອງເອົາການກຳນົດ, ການປ່ຽນແປງ ຫລືການລົບລ້າງອັດຕາພາສີ ແລະສ່ວຍສາອາກອນ;
5. ໃນກໍລະນີທີ່ມີຄວາມຈຳເປັນ, ພິຈາລະນາຮັບຮອງເອົາການແຕ່ງຕັ້ງ, ການຍົກຍ້າຍ ຫລືການປົດຕຳແໜ່ງຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ຫລືຫົວໜ້າອົງການທຽບເທົ່າກະຊວງ ຕາມການສະເໜີຂອງນາຍົກລັດຖະ ມົນຕີ

ແລ້ວລາຍງານໃຫ້ກອງປະຊຸມສະພາແຫ່ງຊາດຄັ້ງໄປນັ້ນ ເພື່ອພິຈາລະນາຮັບຮອງເອົາ;

6. ສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາຕົກລົງກ່ຽວກັບການໃຫ້ອະໄພຍະໂທດ;
7. ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ, ຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ;
8. ຕົກລົງກ່ຽວກັບການໃຫ້ ຫລືການປະສັນຊາດລາວ;
9. ແຕ່ງຕັ້ງ ຫລືປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າ ແລະຜູ້ປະຈຳການຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
10. ແຕ່ງຕັ້ງ ຫລືປົດຕຳແໜ່ງຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດແລະ ຫົວໜ້າກົມຕ່າງໆຂອງຫ້ອງວ່າການສະພາແຫ່ງຊາດ;
11. ແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງບັນດາຜູ້ພິພາກສາຂອງສານປະຊາຊົນທຸກຂັ້ນ ແລະສານທະຫານ;
12. ຊີ້ນຳ-ນຳພາການເຄື່ອນໄຫວວຽກງານຂອງບັນດາກຳມາທິການ,ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແລະຫ້ອງວ່າການສະພາແຫ່ງຊາດ;
13. ພິຈາລະນາ, ແກ້ໄຂຄຳສະເໜີຂອງປະຊາຊົນ;
14. ອອກມະຕິຕົກລົງ, ລະບຽບ, ລະບຽບການ, ຄຳສັ່ງແລະຄຳແນະນຳຕ່າງໆ;
15. ລາຍງານການປະຕິບັດໜ້າທີ່ວຽກງານຂອງຕົນໃນເວລາທີ່ສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ ຕໍ່ກອງປະຊຸມສະພາແຫ່ງຊາດ;
16. ຈັດຕັ້ງຄະນະສະເພາະກິດຂຶ້ນ ເພື່ອພິຈາລະນາບັນຫາໃດໜຶ່ງ ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ;
17. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 25 ( ໃໝ່). ການແບ່ງຄວາມຮັບຜິດຊອບພາຍໃນຄະນະປະຈຳສະພາແຫ່ງຊາດ**

ກຳມະການຂອງຄະນະປະຈຳສະພາແຫ່ງຊາດ ອາດຈະຖືກມອບໝາຍໃຫ້ຮັບຜິດຊອບເປັນຫົວໜ້າກຳມາທິການໃດໜຶ່ງ ຕາມການຕົກລົງຂອງກອງປະຊຸມສະພາແຫ່ງຊາດ ຫລືກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ.

ຄະນະປະຈຳສະພາແຫ່ງຊາດ ອາດຈະມອບໝາຍໃຫ້ຮອງປະທານ ຫລືກຳມະການທ່ານໃດທ່ານໜຶ່ງເປັນຜູ້ປະຈຳການ ເພື່ອເຮັດໜ້າທີ່ແກ້ໄຂວຽກງານປະຈຳວັນຂອງ ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 26 (ໃໝ່). ກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອໂດຍແມ່ນປະທານຄະນະປະຈຳສະພາແຫ່ງຊາດເປັນຜູ້ຮຽກໂຮມ.

ກອງປະຊຸມເປີດກວ້າງຂອງຄະນະປະຈຳສະພາແຫ່ງຊາດອາດຈະເຊື້ອເຊີນບຸກຄົນໃດບຸກຄົນໜຶ່ງເຂົ້າຮ່ວມນຳກໍໄດ້ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ຜູ້ທີ່ຖືກເຊີນເຂົ້າຮ່ວມກອງປະຊຸມນັ້ນມີສິດອອກຄຳເຫັນແຕ່ບໍ່ມີສິດລົງຄະແນນສຽງ.

ໃນກໍລະນີທີ່ປະທານຄະນະປະຈຳສະພາແຫ່ງຊາດຕິດຂັດແມ່ນຮອງປະທານຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ຮັບມອບຫມາຍຈາກປະທານຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຮຽກໂຮມ ແລະນຳພາກອງປະຊຸມ .

ກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີກຳມະການ ຈຳນວນຢ່າງຫນ້ອຍສອງສ່ວນສາມເຂົ້າຮ່ວມ.

**ມາດຕາ 27 (ໃໝ່). ເນື້ອໃນກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ**

ເນື້ອໃນທີ່ຈະນຳມາພິຈາລະນາໃນກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ ຕ້ອງສົ່ງຫລືແຈ້ງໃຫ້ກຳມະການຂອງຄະນະປະຈຳສະພາແຫ່ງຊາດຊາບລ່ວງຫນ້າ ຢ່າງຊ້າ ສອງວັນກ່ອນວັນເປີດກອງປະຊຸມ.

**ມາດຕາ 28. ມະຕິກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ**

ມະຕິກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບສຽງສ່ວນຫລາຍຂອງຈຳນວນກຳມະການທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 29 (ໃໝ່). ຕາປະທັບຂອງຄະນະປະຈຳສະພາແຫ່ງຊາດ**

ຕາປະທັບຂອງຄະນະປະຈຳສະພາແຫ່ງຊາດເປັນຮູບວົງມົນ,ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ",ເບື້ອງລຸ່ມຂຽນວ່າ"ຄະນະປະຈຳສະພາແຫ່ງຊາດ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ຫມວດທີ VI
## ກຳມາທິການຂອງສະພາແຫ່ງຊາດ

**ມາດຕາ 30 (ໃໝ່). ທີ່ຕັ້ງ ແລະພາລະບົດບາດຂອງກຳມາທິການສະພາແຫ່ງຊາດ**

ກຳມາທິການສະພາແຫ່ງຊາດ ແມ່ນອົງການເສນາທິການຂອງສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດ ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາ

ແຫ່ງຊາດ, ມີໜ້າທີ່ຊ່ວຍສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດ ໃນການປະຕິບັດສິດຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະ ຊາຊົນ ແລະອົງການໄອຍະການປະຊາຊົນ.

**ມາດຕາ 31(ໃໝ່). ສິດ ແລະໜ້າທີ່ຂອງຫົວໜ້າ ແລະຮອງຫົວໜ້າກຳມາທິການສະພາແຫ່ງຊາດ**

ຫົວໜ້າກຳມາທິການສະພາແຫ່ງຊາດ ເປັນຜູ້ຊີ້ນຳວຽກງານ ແລະນຳພາກອງປະຊຸມຂອງກຳມາທິການ, ຕາງໜ້າໃຫ້ກຳມາທິການລາຍງານ ແລະສະເໜີວຽກງານຕໍ່ຄະນະປະຈຳ ແລະກອງປະຊຸມສະພາແຫ່ງຊາດ.

ຮອງຫົວໜ້າກຳມາທິການສະພາແຫ່ງຊາດ ເປັນຜູ້ຊ່ວຍຫົວໜ້າກຳມາທິການ ໃນການປະຕິບັດໜ້າທີ່ວຽກງານ ແລະຈະໄດ້ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກຳມາທິການ .

ໃນກໍລະນີທີ່ຫົວໜ້າກຳມາທິການຕິດຂັດ ແມ່ນຮອງຫົວໜ້າກຳມາທິການທ່ານໃດທ່ານໜຶ່ງທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ວ່າການແທນ.

**<u>ມາດຕາ</u> 32. (ໃໝ່) ບັນດາກຳມາທິການຂອງສະພາແຫ່ງຊາດ**

ບັນດາກຳມາທິການຂອງສະພາແຫ່ງຊາດປະກອບດ້ວຍ:

1. ກຳມາທິການກົດໝາຍ;
2. ກຳມາທິການເສດຖະກິດແຜນການ ແລະການເງິນ;
3. ກຳມາທິການວັດທະນະທຳ-ສັງຄົມ;
4. ກຳມາທິການບັນດາເຜົ່າ;
5. ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ກຳມາທິການ ການຕ່າງປະເທດ.

ໃນກໍລະນີທີ່ມີຄວາມຈຳເປັນສະພາແຫ່ງຊາດ ຈະສ້າງຕັ້ງກຳມາທິການໃດໜຶ່ງຂຶ້ນຕື່ມອີກກໍໄດ້ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 33 (ໃໝ່). ສິດ ແລະໜ້າທີ່ຂອງກຳມາທິການກົດໝາຍ**

ກຳມາທິການກົດໝາຍມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງດຳລັດ ແລະຮ່າງນິຕິກຳອື່ນໆ ເພື່ອສະ ເໜີຕໍ່ຄະນະປະຈຳສະພາແຫ່ງຊາດ;
2. ຄົ້ນຄ້ວາ ຕີຄວາມໝາຍຂອງລັດຖະທຳມະນູນ ແລະກົດໝາຍ;
3. ຄົ້ນຄ້ວາກ່ຽວກັບການງົດ, ການລົບລ້າງ, ການຍົກເລີກ ຫລືການປັບປຸງກົດໝາຍ;

4. ຕິດຕາມກວດກາ ແລະຊຸກຍູ້ການປະຕິບັດລັດຖະທຳມະນູນ ແລະກົດໝາຍ ຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນ;
5. ສະເໜີບັນຫາ ແລະມາດຕະການຕ່າງໆ ທີ່ພົວພັນກັບວຽກງານໃນຂົງເຂດກົດໝາຍຕໍ່ສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;
6. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 34 (ໃໝ່). ສິດ ແລະໜ້າທີ່ຂອງກຳມາທິການເສດຖະກິດແຜນການ ແລະການເງິນ**

ກຳມາທິການເສດຖະກິດແຜນການ ແລະການເງິນຂອງສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະປະກອບຄວາມເຫັນໃສ່ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງດຳລັດ ແລະຮ່າງນິຕິກຳອື່ນໆ ໃນຂົງເຂດວຽກງານເສດຖະກິດແຜນ ການ ແລະການເງິນທີ່ລັດຖະບານ ຫລືອົງການຈັດຕັ້ງອື່ນໆສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ;
2. ຄົ້ນຄ້ວາ ແລະປະກອບຄວາມເຫັນໃສ່ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ;
3. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍໃນຂົງເຂດວຽກງານເສດຖະກິດແຜນການ ແລະການເງິນ;
4. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ -ສັງຄົມ ແລະແຜນງົບປະມານແຫ່ງລັດໃນຂົງເຂດວຽກງານເສດຖະກິດແຜນ ການ ແລະການເງິນ;
5. ສະເໜີບັນຫາ ແລະມາດຕະການຕ່າງໆ ທີ່ພົວພັນກັບວຽກງານເສດຖະກິດແຜນການ ແລະການເງິນ ຕໍ່ສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;
6. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 35 (ໃໝ່). ສິດ ແລະໜ້າທີ່ຂອງກຳມາທິການວັດທະນະທຳ-ສັງຄົມ**

ກຳມາທິການວັດທະນະທຳ-ສັງຄົມ ມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ ແລະປະກອບຄວາມເຫັນໃສ່ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງດຳລັດ ແລະຮ່າງນິຕິກຳອື່ນໆ ໃນຂົງເຂດວຽກງານວັດທະນະທຳ-ສັງຄົມ ທີ່ລັດຖະບານ ຫລືອົງການຈັດຕັ້ງອື່ນໆສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ;

2. ຄົ້ນຄ້ວາ ແລະປະກອບຄວາມເຫັນໃສ່ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ໃນຂົງເຂດວຽກງານວັດທະນະທຳ-ສັງຄົມ;
3. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດວຽກງານວັດທະນະທຳ-ສັງຄົມ;
4. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ໃນຂົງເຂດວຽກງານວັດທະນະທຳ-ສັງຄົມ;
5. ສະເໜີບັນຫາ ແລະມາດຕະການຕ່າງໆ ທີ່ພົວພັນກັບວຽກງານວັດທະນະທຳ-ສັງຄົມ ຕໍ່ສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;
6. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານສະພາ ແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 36 (ໃໝ່). ສິດ ແລະໜ້າທີ່ຂອງກຳມາທິການບັນດາເຜົ່າ**

ກຳມາທິການບັນດາເຜົ່າມີສິດ ແລະໜ້າທີ່ດັ່ງນີ້ :

1. ຄົ້ນຄ້ວາ ແລະປະກອບຄວາມເຫັນໃສ່ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງດຳລັດ ແລະຮ່າງນິຕິກຳອື່ນໆ ໃນຂົງເຂດວຽກງານບັນດາເຜົ່າທີ່ລັດຖະບານ ຫລື ອົງການຈັດຕັ້ງອື່ນໆສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ;
2. ຄົ້ນຄວ້າ ແລະປະກອບຄວາມເຫັນໃສ່ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນຂົງເຂດວຽກງານບັນດາເຜົ່າ ແລະການພັດທະນາຊົນນະບົດ;
3. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍໃນຂົງເຂດວຽກງານບັນດາເຜົ່າ ແລະການພັດທະນາຊົນນະບົດ;
4. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດໃນຂົງເຂດວຽກງານບັນດາເຜົ່າ ແລະ ການພັດທະນາຊົນນະບົດ;
5. ສະເໜີບັນຫາ ແລະມາດຕະການຕ່າງໆ ທີ່ພົວພັນກັບວຽກງານບັນດາເຜົ່າ ຕໍ່ສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;
6. ປະຕິບັດສິດ ແລະໜ້າທີ່ອື່ນໆຕາມການມອບໝາຍຂອງປະທານສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 37 (ໃໝ່). ສິດ ແລະໜ້າທີ່ຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ ແລະປະກອບຄວາມເຫັນໃສ່ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງ ດຳລັດ ແລະຮ່າງນິຕິກຳອື່ນໆ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບທີ່ລັດຖະບານ ຫລືອົງການຈັດຕັ້ງອື່ນໆ ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ;
2. ຄົ້ນຄ້ວາ ແລະ ປະກອບຄວາມເຫັນໃສ່ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ;
3. ຕິດຕາມກວດກາ ແລະຊຸກຍູ້ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ສະເໜີບັນຫາ ແລະມາດຕະການຕ່າງໆ ທີ່ພົວພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຕໍ່ສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;
6. ປະຕິບັດສິດ ແລະໜ້າທີ່ອື່ນໆຕາມການມອບໝາຍຂອງປະທານສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 38 (ໃໝ່). ສິດ ແລະໜ້າທີ່ຂອງກຳມາທິການ ການຕ່າງປະເທດ**

ກຳມາທິການ ການຕ່າງປະເທດ ມີສິດ ແລະໜ້າທີ່ດັ່ງນີ້ :

1. ຄົ້ນຄ້ວາ ແລະປະກອບຄວາມເຫັນໃສ່ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງດຳລັດ, ຮ່າງສົນທິສັນຍາ, ຮ່າງສັນຍາທີ່ສຳຄັນ ແລະຮ່າງນິຕິກຳອື່ນໆ ໃນຂົງເຂດວຽກງານການຕ່າງປະເທດທີ່ລັດຖະບານ ຫລືອົງການຈັດຕັ້ງອື່ນໆສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ;
2. ຄົ້ນຄ້ວາ ແລະປະກອບຄວາມເຫັນໃສ່ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນຂົງເຂດວຽກງານການຕ່າງປະເທດ;
3. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍໃນຂົງເຂດວຽກງານການຕ່າງປະເທດ;
4. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ- ສັງຄົມ ແລະແຜນງົບປະມານແຫ່ງລັດໃນຂົງເຂດວຽກງານການຕ່າງປະເທດ ລວມທັງຕິດຕາມກວດກາການພົວພັນຮ່ວມມືກັບຕ່າງປະເທດ;

5. ຄົ້ນຄ້ວາກ່ຽວກັບການໃຫ້ສັດຕະຍາບັນ ຫລືການລົບລ້າງສົນທິສັນຍາ, ສັນຍາທີ່ໄດ້ເຊັນກັບຕ່າງປະເທດໂດຍປະສານສົມທົບກັບກຳມາທິການອື່ນໆທີ່ກ່ຽວຂ້ອງ ເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາ;
6. ສະເໜີບັນຫາ ແລະມາດຕະການຕ່າງໆທີ່ພົວພັນກັບວຽກງານການຕ່າງປະເທດຕໍ່ສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;
7. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານສະພາ ແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 39 (ໃໝ່). ລະບອບວິທີເຮັດວຽກຂອງກຳມາທິການ**

ບັນດາກຳມາທິການຂອງສະພາແຫ່ງຊາດເຮັດວຽກ ຕາມຫລັກການລວມສູນປະຊາທິປະໄຕ ໂດຍມີການປະສານສົມທົບກັນລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ເອົາກອງປະຊຸມເປັນບ່ອນປຶກສາຫາລື ແລະ ຕົກລົງບັນຫາຕາມສຽງສ່ວນຫລາຍ, ປະຕິບັດລະບອບແບ່ງງານ ແລະບຸກຄົນຮັບຜິດຊອບ, ເຮັດວຽກຢ່າງມີແຜນການ, ມີການກວດກາ, ສະຫລຸບ, ຖອດຖອນບົດຮຽນ ແລະປະຕິບັດລະບອບລາຍງານ, ຂໍຄວາມເຫັນຊີ້ນຳຈາກຄະນະປະຈຳສະພາແຫ່ງຊາດ, ປະສານສົມທົບກັບກຳມາທິການຕ່າງໆຂອງສະພາແຫ່ງຊາດດ້ວຍກັນ, ກັບອົງການຈັດຕັ້ງພັກ, ອົງການຈັດ ຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ, ພົວພັນກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນຕາມການເຫັນດີຂອງຄະນະປະ ຈຳສະພາແຫ່ງຊາດ.

**ມາດຕາ 40. ກອງປະຊຸມຄົບຄະນະຂອງກຳມາທິການ**

ກອງປະຊຸມຄົບຄະນະຂອງກຳມາທິການສະພາແຫ່ງຊາດ ເປີດຂຶ້ນຢ່າງໜ້ອຍປີລະເທື່ອກ່ອນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ.

ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນກອງປະຊຸມຄົບຄະນະຂອງກຳມາທິການໃດໜຶ່ງຈະເປີດຂຶ້ນໃນເວລາໃດກໍໄດ້ ຫລືຈະເປີດຮ່ວມກັບກຳມາທິການອື່ນ ຫລືເຊີນບຸກຄົນ ອື່ນທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມນຳກໍໄດ້.

**ມາດຕາ 41** (ໃໝ່). **ຕາປະທັບຂອງກຳມາທິການສະພາແຫ່ງຊາດ**

ກຳມາທິການຂອງສະພາແຫ່ງຊາດ ມີຕາປະທັບສະເພາະຂອງຕົນເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ", ເບື້ອງລຸ່ມຂຽນຊື່ຂອງກຳມາທິການ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ VII

## ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

**ມາດຕາ 42 (ໃໝ່). ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແມ່ນເສນາທິການຂອງສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດ ໃນການຕິດຕາມກວດກາການປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດໃນເຂດເລືອກຕັ້ງຂອງຕົນ.

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ປະກອບດ້ວຍສະມາຊິກສະແຫ່ງຊາດທັງໝົດຢູ່ໃນເຂດເລືອກຕັ້ງ ຊຶ່ງຫົວໜ້າ, ຮອງຫົວໜ້າ ແລະຜູ້ປະຈຳການແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ແຕ່ງຕັ້ງ ຫລືປົດຕຳແໜ່ງ.

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

**ມາດຕາ 43 (ໃໝ່). ສິດ ແລະໜ້າທີ່ຂອງຄະນະສະມາຊິກສະພາແຫ່ງຊາດ**

ໃນເຂດເລືອກຕັ້ງຂອງຕົນ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີສິດ ແລະໜ້າທີ່ດັ່ງນີ້:

1. ໂຄສະນາເຜີຍແຜ່ແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະມະຕິຕ່າງໆຂອງສະພາແຫ່ງຊາດ;
2. ເຂົ້າຮ່ວມຄົ້ນຄວ້າ, ປະກອບຄວາມເຫັນ ແລະຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ;
3. ຕິດຕາມກວດກາການປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ;
4. ຊີ້ນຳ, ນຳພາທຸກການເຄື່ອນໄຫວວຽກງານຂອງຫ້ອງການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
5. ປຸກລະດົມປະຊາຊົນບັນດາເຜົ່າ ເຂົ້າຮ່ວມໃນການປົກປັກຮັກສາ ແລະພັດທະນາປະເທດຊາດ;
6. ຮັບເອົາຄຳຮ້ອງທຸກ ຫລືຄຳສະເໜີຂອງປະຊາຊົນ ເພື່ອປຶກສາຫາລືກັບອົງການທີ່ກ່ຽວຂ້ອງພິຈາລະນາແກ້ໄຂຢ່າງສົມເຫດສົມຜົນ;
7. ລາຍງານການເຄື່ອນໄຫວວຽກງານຂອງຕົນໃຫ້ຄະນະປະຈຳສະພາແຫ່ງຊາດຢ່າງເປັນປົກກະຕິ;

8. ພົວພັນ ແລະປະສານສົມທົບກັບພະແນກການ ແລະອົງການຈັດຕັ້ງອື່ນໆໃນການ ປະຕິບັດໜ້າທີ່ວຽກງານຂອງຕົນ ແລະເຊື້ອເຊີນເອົາພາກສ່ວນທີ່ກ່ຽວຂ້ອງມາໃຫ້ ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາໃດໜຶ່ງ;
9. ເຂົ້າຮ່ວມກອງປະຊຸມ ແລະພິທີການສຳຄັນຕ່າງໆຂອງອົງການຈັດຕັ້ງພັກ, ອົງການ ຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງ ອື່ນໆ;
10. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 44 (ໃໝ່). ຕາປະທັບຂອງຄະນະສະມາຊິກສະພາແຫ່ງຊາດ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີຕາປະທັບສະເພາະຂອງ ຕົນ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຂຽນວ່າ: "ສະພາແຫ່ງຊາດ", ຢູ່ເບື້ອງລຸ່ມຂຽນວ່າ " ຄະນະສະມາຊິກສະພາແຫ່ງຊາດເຂດ ເລືອກຕັ້ງທີ... ແຂວງ... " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ VIII
## ສະມາຊິກສະພາແຫ່ງຊາດ

**ມາດຕາ 45. ສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ເປັນຕົວແທນແຫ່ງມະນາຈິດ ແລະຄວາມມຸ້ງມາດປາດຖະໜາ ຂອງປະຊາຊົນບັນດາເຜົ່າ ຊຶ່ງແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງຕາມຫລັກການ ທີ່ໄດ້ກຳນົດ ໄວ້ໃນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ .

**ມາດຕາ 46 (ໃໝ່). ອາຍຸການຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ໃນກໍລະນີທີ່ມີການເລືອກຕັ້ງສະມາຊິກສະພາແຫ່ງຊາດແທນນັ້ນ ອາຍຸການຂອງສະ ມາຊິກ ສະພາແຫ່ງຊາດທີ່ໄດ້ຮັບເລືອກຕັ້ງແທນ ຈະເລີ່ມແຕ່ກອງປະຊຸມສະພາແຫ່ງຊາດທີ່ຖັດຈາກການ ເລືອກຕັ້ງແທນນັ້ນໄປເຖິງວັນເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດໃໝ່.

**ມາດຕາ 47 (ໃໝ່). ສິດ ແລະໜ້າທີ່ຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ, ກຳແໜ້ນ ແລະຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບກົດ ໝາຍຂອງລັດ ແລະມະຕິຂອງກອງປະຊຸມສະພາແຫ່ງຊາດ;

2. ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ມະຕິຕ່າງໆຂອງສະພາແຫ່ງຊາດ, ປຸກລະດົມຊັ້ນຄົນ ແລະປະຊາຊົນບັນດາເຜົ່າເຂົ້າຮ່ວມການປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດຫມາຍຂອງລັດ, ເຂົ້າຮ່ວມການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ;
3. ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ, ອອກຄວາມເຫັນແລະລົງຄະແນນສຽງ ຕໍ່ທຸກບັນຫາທີ່ຍົກຂຶ້ນອະພິປາຍ ຫລືຂໍການຕົກລົງຈາກສະພາແຫ່ງຊາດ.

    ໃນກໍລະນີທີ່ຈໍາເປັນສະມາຊິກສະພາແຫ່ງຊາດທ່ານໃດທ່ານຫນຶ່ງຫາກບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ນັ້ນ ກໍຕ້ອງຂໍອະນຸຍາດຈາກຄະນະປະຈໍາສະພາ ແຫ່ງຊາດກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ;
4. ເຂົ້າຮ່ວມວຽກງານການປັບປຸງກໍ່ສ້າງຮາກຖານ, ເຂົ້າຮ່ວມໃນການຄົ້ນຄວ້າແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດໃນເຂດເລືອກຕັ້ງ ຂອງຕົນ, ໃກ້ຊິດຕິດແທດກັບປະຊາຊົນ, ຢູ່ໃຕ້ການກວດກາຂອງປະຊາຊົນ, ນໍາເອົາຄວາມຄິດຄວາມເຫັນ ແລະຄວາມມຸ້ງມາດປາດຖະຫນາຂອງປະຊາຊົນສະເຫນີຕໍ່ສະພາແຫ່ງຊາດ ຫລືຄະນະປະຈໍາສະພາແຫ່ງຊາດ;
5. ຮັບເອົາຄໍາຮ້ອງທຸກ ຫລືຄໍາສະເຫນີຂອງປະຊາຊົນ ເພື່ອນໍາໄປປຶກສາຫາລືກັບອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ, ແກ້ໄຂຢ່າງສົມເຫດສົມຜົນ;
6. ຊັກຖາມນາຍົກລັດຖະມົນຕີ ຫລືສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ໃນກອງປະຊຸມສະພາແຫ່ງຊາດ;
7. ລາຍງານການເຄື່ອນໄຫວວຽກງານຕໍ່ປະຊາຊົນ ໃນເຂດເລືອກຕັ້ງຂອງຕົນຢ່າງຫນ້ອຍປີລະສອງເທື່ອ;
8. ລາຍງານການເຄື່ອນໄຫວປະຕິບັດຫນ້າທີ່ວຽກງານຂອງຕົນ ໃຫ້ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການ ແລະຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ່ຕົນສັງກັດ;
9. ເຂົ້າຮ່ວມກອງປະຊຸມ ແລະພິທີການສໍາຄັນຕ່າງໆຂອງອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນໃນເຂດເລືອກຕັ້ງຂອງຕົນ;
10. ປະຕິບັດສິດ ແລະຫນ້າທີ່ອື່ນໆຕາມທີ່ໄດ້ກໍານົດໄວ້ໃນກົດຫມາຍ ແລະລະບຽບ ພາຍໃນຂອງສະພາແຫ່ງຊາດ.

**ມາດຕາ 48 (ໃຫມ່). ການສັງກັດ ແລະການຄວບຕໍາແຫນ່ງຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ແຕ່ລະທ່ານຕ້ອງສັງກັດຢູ່ໃນກໍາມາທິການໃດຫນຶ່ງຂອງສະພາແຫ່ງຊາດ. ສະມາຊິກສະພາແຫ່ງຊາດສາມາດຄວບຕໍາແຫນ່ງໄດ້.

**ມາດຕາ 49 (ໃໝ່). ການສິ້ນສຸດການເປັນສະມາຊິກສະພາແຫ່ງຊາດ**

ການເປັນສະມາຊິກສະພາແຫ່ງຊາດ ຈະສິ້ນສຸດລົງໃນກໍລະນີດັ່ງນີ້ :

1. ເສຍຊີວິດ;
2. ລາອອກ;
3. ຖືກປົດອອກຈາກການເປັນສະມາຊິກສະພາແຫ່ງຊາດ;
4. ໝົດອາຍຸການຂອງສະມາຊິກສະພາແຫ່ງຊາດ.

**ມາດຕາ 50. ນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ຈະໄດ້ຮັບການປະຕິບັດນະໂຍບາຍສະເພາະ ເພື່ອຮັບປະ ກັນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ.

**ມາດຕາ 51. ອະພິສິດຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດຈະບໍ່ຖືກຈັບຕົວ, ກັກຂັງ ຫລືດໍາເນີນຄະດີອາຍາຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກສະພາແຫ່ງຊາດ ຫລືຄະນະປະຈໍາສະພາແຫ່ງຊາດ .

ຖ້າຫາກວ່າມີຄວາມຈໍາເປັນຕ້ອງໄດ້ຈັບຕົວສະມາຊິກສະພາແຫ່ງຊາດໃນກໍລະນີທີ່ມີການກະທໍາຜິດເຊິ່ງໜ້າ ຫລືກໍລະນີທີ່ຮີບດ່ວນນັ້ນ ອົງການທີ່ໄດ້ກັກຂັງສະມາຊິກສະພາແຫ່ງຊາດ ຕ້ອງລາຍງານທັນທີໃຫ້ສະພາແຫ່ງຊາດ ຫລືຄະນະປະຈໍາສະພາແຫ່ງຊາດ ເພື່ອຂໍຄວາມເຫັນກ່ຽວກັບການດໍາເນີນຄະດີໃນຂັ້ນຕໍ່ໄປ. ການສືບສວນ-ສອບສວນ ບໍ່ໃຫ້ເປັນສາເຫດພາໃຫ້ສະມາຊິກທີ່ຖືກດໍາເນີນຄະດີນັ້ນຂາດກອງປະຊຸມສະພາແຫ່ງຊາດ .

## ໝວດທີ IX
## ຫ້ອງວ່າການສະພາແຫ່ງຊາດ

**ມາດຕາ 52 (ໃໝ່). ທີ່ຕັ້ງ ແລະພາລະບົດບາດຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ແມ່ນອົງການເສນາທິການຂອງສະພາແຫ່ງຊາດ ແລະຄະນະປະຈໍາສະພາແຫ່ງຊາດ, ມີພາລະບົດບາດຄົ້ນຄວ້າ, ສະຫລຸບສັງລວມ, ຄຸ້ມ ຄອງວຽກງານບໍລິຫານ, ແຜນການ ແລະການເງິນ, ອໍານວຍຄວາມສະດວກໃຫ້ແກ່ຄະນະ ປະຈໍາ, ບັນດາກໍາມາທິການ, ແລະສະມາຊິກສະພາແຫ່ງຊາດ ໃນການເຄື່ອນໄຫວປະຕິ ບັດວຽກງານ.

**ມາດຕາ 53 (ໃໝ່). ສິດ ແລະໜ້າທີ່ຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄວ້າສະຫລຸບສັງລວມສະພາບການຮອບດ້ານ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍ, ແຜນພັດທະນາເສດຖະກິດ-ສັງ ຄົມ ແລະແຜນງົບປະມານແຫ່ງລັດ ເພື່ອລາຍງານໃຫ້ຄະນະປະຈຳສະພາ ແຫ່ງຊາດ;
2. ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຄະນະປະຈຳສະພາແຫ່ງຊາດ, ກຳມາທິການ ແລະສະມາຊິກສະພາແຫ່ງຊາດໃນການເຄື່ອນໄຫວປະຕິບັດ ໜ້າທີ່ວຽກງານ;
3. ຈັດຕັ້ງ, ຄຸ້ມຄອງ, ບຳລຸງສ້າງ ແລະປະຕິບັດນະໂຍບາຍຕໍ່ພະນັກງານ, ລັດຖະກອນຂອງຫ້ອງວ່າການສະພາແຫ່ງຊາດ;
4. ກະກຽມ ແລະຮັບໃຊ້ໃຫ້ແກ່ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະ ນະປະຈຳສະພາແຫ່ງຊາດ ແລະກອງປະຊຸມຂອງບັນດາກຳມາທິການຂອງ ສະພາແຫ່ງຊາດ;
5. ຂຶ້ນແຜນ ແລະຄຸ້ມຄອງການນຳໃຊ້ງົບປະມານ, ວັດຖຸອຸປະກອນ ແລະຊັບສົມບັດຂອງສະພາແຫ່ງຊາດ;
6. ຄົ້ນຄວ້າຄຳຮ້ອງທຸກ, ຄຳສະເໜີ ແລະບັນຫາສັນຊາດ ເພື່ອສະເໜີຕໍ່ຄະ ນະປະຈຳສະພາແຫ່ງຊາດ;
7. ຮັບຜິດຊອບຄວາມເປັນລະບຽບຮຽບຮ້ອຍຂອງສຳນັກງານສະພາແຫ່ງຊາດ;
8. ຊີ້ນຳ, ຕິດຕາມກວດກາ ແລະຊຸກຍູ້ການເຄື່ອນໄຫວວຽກງານຂອງຫ້ອງ ການສະພາແຫ່ງຊາດໃນແຕ່ລະເຂດເລືອກຕັ້ງ;
9. ຮັບຜິດຊອບວຽກງານສູນຂໍ້ມູນຂ່າວສານ ແລະຫໍສະໝຸດຂອງສະພາແຫ່ງ ຊາດ;
10. ພົວພັນ ແລະປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ, ຫ້ອງວ່າການສູນກາງພັກ, ຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະກັບອົງການອື່ນໆທີ່ກ່ຽວຂ້ອງ;
11. ພົວພັນກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນ ຕາມການເຫັນດີຂອງ ຄະນະປະຈຳສະພາແຫ່ງຊາດ;
12. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານສະພາ ແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 54. ໂຄງປະກອບຂອງຫ້ອງວ່າການສະພາແຫ່ງຊາດ**

ໂຄງປະກອບຂອງຫ້ອງວ່າການສະພາແຫ່ງຊາດແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ກຳນົດ.

**ມາດຕາ 55 (ໃໝ່). ຕາປະທັບຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ໃນກາງວົງມົນມີ ເຄື່ອງຫມາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ: " ສະພາແຫ່ງຊາດ ", ເບື້ອງ ລຸ່ມຂຽນວ່າ: " ຫ້ອງວ່າການ " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 56 (ໃຫມ່). ຫ້ອງການສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

ໃນແຕ່ລະເຂດເລືອກຕັ້ງ ມີຫ້ອງການສະພາແຫ່ງຊາດ ຊຶ່ງເປັນເສນາທິການໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະຫ້ອງວ່າການສະພາແຫ່ງຊາດ, ມີຫນ້າທີ່ອຳນວຍຄວາມສະດວກໃຫ້ແກ່ສະມາຊິກສະພາແຫ່ງຊາດ ໃນການເຄື່ອນໄຫວປະຕິບັດຫນ້າທີ່ວຽກງານ.

**ມາດຕາ 57 (ໃຫມ່). ໂຄງປະກອບ, ສິດ ແລະຫນ້າທີ່ຂອງຫ້ອງການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ໂຄງປະກອບ, ສິດ ແລະຫນ້າທີ່ຂອງຫ້ອງການສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແມ່ນຫ້ອງວ່າການສະພາແຫ່ງຊາດ ເປັນຜູ້ກຳນົດ.

## ຫມວດທີ X

## ການສະເຫນີ ແລະການພິຈາລະນາຮ່າງກົດຫມາຍ

**ມາດຕາ 58. ການສະເຫນີສ້າງ ຫລືປັບປຸງກົດຫມາຍ**

ອົງການຈັດຕັ້ງທີ່ມີສິດສະເຫນີສ້າງຮ່າງກົດຫມາຍ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກ່ອນຈະສ້າງຮ່າງກົດໝາຍ ຫລືປັບປຸງກົດຫມາຍໃດຫນຶ່ງຕ້ອງເຮັດຄຳສະເຫນີຕໍ່ຄະນະປະຈຳສະພາແຫ່ງຊາດ ໂດຍແຈ້ງຈຸດປະສົງ ແລະເຫດຜົນຂອງການສ້າງຮ່າງກົດຫມາຍ ຫລືການປັບປຸງກົດຫມາຍນັ້ນ.

ຄະນະປະຈຳສະພາແຫ່ງຊາດ ຕ້ອງຕອບຄຳສະເຫນີດັ່ງກ່າວ ເປັນລາຍລັກອັກສອນຢ່າງຊ້າບໍ່ໃຫ້ເກີນສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳສະເຫນີເປັນຕົ້ນໄປ.

**ມາດຕາ 59 (ໃຫມ່). ການສະເຫນີຮ່າງກົດຫມາຍຕໍ່ຄະນະປະຈຳສະພາແຫ່ງຊາດ**

ອົງການຈັດຕັ້ງທີ່ໄດ້ສ້າງ ຫລືປັບປຸງກົດຫມາຍສຳເລັດແລ້ວ ຕ້ອງສົ່ງຮ່າງກົດຫມາຍນັ້ນຢ່າງຊ້າຫົກສິບວັນກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ ໃຫ້ຄະນະປະຈຳສະພາ ແຫ່ງຊາດພິຈາລະນາ.

**ມາດຕາ 60 (ໃຫມ່). ການຄົ້ນຄ້ວາຮ່າງກົດຫມາຍ**

ຄະນະປະຈຳສະພາແຫ່ງຊາດຈະມອບຮ່າງກົດໝາຍ ໃຫ້ກຳມາທິການກົດຫມາຍ ແລະກຳມາທິການອື່ນທີ່ກ່ຽວຂ້ອງຄົ້ນຄ້ວາຢ່າງລະອຽດ ແລ້ວລາຍງານຜົນການຄົ້ນຄວ້າໃຫ້ຄະນະປະຈຳສະພາແຫ່ງຊາດ.

ຄະນະປະຈຳສະພາແຫ່ງຊາດເປັນຜູ້ຕົກລົງ ກ່ຽວກັບການນຳເອົາຮ່າງກົດຫມາຍນັ້ນໄປປຶກສາຫາລືຄວາມຄິດຄວາມເຫັນຂອງປະຊາຊົນ ກ່ອນທີ່ຈະນຳສະເໜີຕໍ່ກອງປະຊຸມສະ ພາແຫ່ງຊາດພິຈາລະນາຮັບຮອງເອົາ.

**ມາດຕາ 61 (ໃຫມ່). ການສະເຫນີຮ່າງກົດຫມາຍ ຕໍ່ກອງປະຊຸມສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ຕົກລົງໃຫ້ຫົວຫນ້າກຳມາທິການກົດຫມາຍຂອງສະພາແຫ່ງຊາດ ຫລືຜູ້ຕາງໜ້າອົງການຈັດຕັ້ງທີ່ສ້າງຮ່າງກົດຫມາຍນັ້ນ ເປັນຜູ້ສະເຫນີຮ່າງກົດ ຫມາຍຕໍ່ກອງປະຊຸມສະພາແຫ່ງຊາດ.

## ຫມວດທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 62 (ໃຫມ່). ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຈັດຕັ້ງປະຕິບັດກົດຫມາຍສະບັບນີ້ .

**ມາດຕາ 63. ຜົນສັກສິດ**

ກົດຫມາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດຫມາຍສະບັບນີ້ ປ່ຽນແທນກົດຫມາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 005/ສພຊ, ລົງວັນທີ 25 ເດືອນ ກຸມພາ ປີ 1993. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດຫມາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ